ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງອຸດົມໄຊ

ເລກທີ......110......../ອຊ

ອຸດົມໄຊ, ວັນທີ..24...02...2022

# ຂໍ້ຕົກລົງ
## ວ່າດ້ວຍກອງທຶນຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂບັນຫາຢາເສບຕິດ

- ອີງຕາມ ກົດໝາຍ ວ່າດ້ວຍອົງການປົກຄອງທ້ອງຖິ່ນ ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015;
- ອີງຕາມ ກົດໝາຍ ວ່າດ້ວຍຢາເສບຕິດ ສະບັບເລກທີ 10/ສພຊ, ລົງວັນທີ 25 ທັນວາ 2021;
- ອີງຕາມ ກົດໝາຍ ວ່າດ້ວຍການສ້າງນິຕິກຳ ສະບັບເລກທີ 19/ສພຊ, ລົງວັນທີ 12 ກໍລະກົດ 2012;
- ອີງຕາມ ມະຕິກອງປະຊຸມ ສະໄໝສາມັນເທື່ອທີ 2 ຂອງສະມາຊິກສະພາປະຊາຊົນແຂວງອຸດົມໄຊ ຊຸດທີ II ສະບັບເລກທີ 268/ສພຂ, ລົງວັນທີ 09 ກຸມພາ 2022.

## ເຈົ້າແຂວງອຸດົມໄຊ ຕົກລົງ:

### ໝວດທີ 1
### ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ.**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບກອງທຶນຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂບັນຫາຢາເສບຕິດ ເພື່ອລະດົມທຶນ, ສະສົມທຶນ ຈາກບຸກຄົນ, ນິຕິບຸກຄົນ, ຄົວເຮືອນ, ອົງການຈັດຕັ້ງພັກ-ລັດ ແລະ ອົງການຈັດຕັ້ງສາກົນທັງພາຍໃນ ແລະ ຕ່າງປະເທດ ເພື່ອມາຮັບໃຊ້ວຽກງານກວດກາ, ຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂບັນຫາຢາເສບຕິດ ພ້ອມທັງປິ່ນປົວ, ຝຶກວິຊາຊີບເບື້ອງຕົ້ນ ໃຫ້ແກ່ຜູ້ຕິດຢາເສບຕິດ ແນໃສ່ເຮັດໃຫ້ສັງຄົມປອດຈາກຢາເສບຕິດ.

**ມາດຕາ 2 ກອງທຶນຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂບັນຫາຢາເສບຕິດ.**

ກອງທຶນຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂບັນຫາຢາເສບຕິດ ແມ່ນກອງທຶນຂອງລັດ ທີ່ສ້າງຕັ້ງຂຶ້ນເພື່ອລະດົມທຶນ, ສະສົມທຶນ ແລະ ຄຸ້ມຄອງ ແນໃສ່ຮັບປະກັນໃຫ້ມີງົບປະມານ ນຳໃຊ້ເຂົ້າໃນວຽກງານກວດກາ, ຄວບຄຸມ, ສະກັດກັ້ນ, ແກ້ໄຂບັນຫາຢາເສບຕິດ ແລະ ການບຳບັດປິ່ນປົວ ຟື້ນຟູສຸຂະພາບ, ຝຶກວິຊາຊີບໃຫ້ແກ່ຜູ້ຕິດຢາເສບຕິດ ຢ່າງມີປະສິດທິພາບ ແລະ ປະສິດທິຜົນ.

**ມາດຕາ 3 ອະທິບາຍຄຳສັບ.**

ຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍດັ່ງນີ້:

1. **ກອງທຶນ** ໝາຍເຖິງການປະກອບສ່ວນທຶນຮອນຈາກພາກລັດ, ເອກະຊົນ, ບຸກຄົນ, ນິຕິບຸກຄົນ, ຄົວເຮືອນ ແລະ ອົງການຈັດຕັ້ງສາກົນ ຕາມລະບຽບການ ແລະ ຄວາມສະໝັກໃຈ;
2. **ຄຸ້ມຄອງ** ໝາຍເຖິງການຈັດຕັ້ງປະຕິບັດບັນດາຫຼັກການ, ລະບຽບການ ແລະ ມາດຕະການກ່ຽວຂ້ອງກັບການຄຸ້ມຄອງກອງທຶນຄວບຄຸມ, ສະກັດກັ້ນ, ແກ້ໄຂບັນຫາຢາເສບຕິດ ໃຫ້ມີປະສິດທິຜົນ ແລະ ຖືກຕ້ອງຕາມລະບຽບການ;

3. ຄວບຄຸມ ໝາຍເຖິງ ການຄຸ້ມຄອງ, ການກຳຈັດ, ການຜະລິດ, ການຄ້າຂາຍ, ການຂົນສົ່ງ ແລະ ການນຳໃຊ້ຢາເສບຕິດ;

4. **ການສະກັດກັ້ນ** ໝາຍເຖິງ ການປ້ອງກັນດ້ວຍວິທີການຕ່າງໆ ເພື່ອບໍ່ໃຫ້ເກີດ ຫຼື ບໍ່ໃຫ້ມີບັນຫາຢາເສບຕິດ;

5. **ການແກ້ໄຂ** ໝາຍເຖິງ ການປາບປາມ, ຈັບກຸມ, ດຳເນີນຄະດີ, ການບຳບັດປິ່ນປົວຜູ້ຕິດຢາເສບຕິດ ລວມທັງການຝຶກວິຊາຊີບ ຊອກຫາວຽກເຮັດງານທຳໃຫ້ແກ່ຜູ້ທີ່ອອກຈາກຢາເສບຕິດ;

6. **ສູນບຳບັດປິ່ນປົວ** ໝາຍເຖິງ ບ່ອນບຳບັດປິ່ນປົວ ແລະ ຟື້ນຟູສຸຂະພາບຜູ້ຕິດຢາເສບຕິດ ເພື່ອໃຫ້ອອກຈາກຢາເສບຕິດ ພ້ອມທັງມີການຝຶກວິຊາຊີບເບື້ອງຕົ້ນ.

**ມາດຕາ 4 ຫຼັກການຄຸ້ມຄອງ ແລະ ການນຳໃຊ້ກອງທຶນ.**

1. ທຸກລາຍຮັບ, ລາຍຈ່າຍເງິນກອງທຶນ ຕ້ອງເຄື່ອນໄຫວຜ່ານບັນຊີກອງທຶນ ທີ່ເປີດບັນຊີຢູ່ຄັງເງິນປະຈຳແຂວງ ແລະ ຄັງເງິນປະຈຳເມືອງ, ລົງບັນຊີຕາມຫຼັກການ ແລະ ລະບຽບການພື້ນຖານບັນຊີແຫ່ງລັດ;

2. ທຸກລາຍຮັບກອງທຶນ ແມ່ນມອບໃຫ້ແຂວງ ຄຸ້ມຄອງ 60 % ແລະ ເມືອງ 40 %;

3. ຮັບປະກັນການຊ່ວຍເຫຼືອ ແລະ ການຄຸ້ມຄອງກອງທຶນ ຕາມກົດໝາຍ, ລະບຽບການ ຢ່າງລວມສູນ, ເປັນເອກະພາບ ໃນຂອບເຂດທົ່ວແຂວງອຸດົມໄຊ;

4. ນຳໃຊ້ຖືກຕ້ອງຕາມເປົ້າໝາຍ, ປະຢັດ, ມີປະສິດທິພາບ, ປະສິດທິຜົນ, ໂປ່ງໃສ, ຍຸຕິທຳ ແລະ ສາມາດກວດສອບໄດ້.

**ມາດຕາ 5 ຂອບເຂດການນຳໃຊ້.**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ພົວພັນກັບວຽກງານກວດກາ, ຄວບຄຸມ, ສະກັດກັ້ນ, ແກ້ໄຂບັນຫາຢາເສບຕິດ ໃນຂອບເຂດທົ່ວແຂວງອຸດົມໄຊ.

## ໝວດທີ 2
## ແຫຼ່ງລາຍຮັບ ແລະ ການນຳໃຊ້ກອງທຶນ

**ມາດຕາ 6 ແຫຼ່ງລາຍຮັບຂອງກອງທຶນ.**

1. ຮັບຈາກງົບປະມານຂອງລັດ ຕາມການຕົກລົງຂອງການນຳແຂວງ ແລະ ເມືອງ;

2. ຮັບຈາກການແບ່ງປັນລາຍຮັບ ທີ່ໄດ້ຈາກການດຳເນີນຄະດີ ກ່ຽວກັບຢາເສບຕິດ ເປັນຕົ້ນແມ່ນ ການຮິບຊັບ, ຍຶດຊັບ ແລະ ປັບໃໝ ຈຳນວນ 60% ຕາມດຳລັດເລກທີ 267/ລບ ລົງວັນທີ 5 ສິງຫາ 2014 ແລະ ຄຳສັ່ງເລກທີ 07/ນຍ ລົງວັນທີ 5 ເມສາ 2017;

3. ຮັບຈາກການປະກອບສ່ວນ, ການລະດົມທຶນ, ພັນທະ ຂອງບຸກຄົນ, ນິຕິບຸກຄົນ, ລັດວິສາຫະກິດ ແລະ ວິສາຫະກິດຕ່າງໆ ດັ່ງນີ້:

| | | | |
|---|---|---|---|
| 3.1 ພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ | | 20.000 | ກີບ ຂຶ້ນໄປ ຕໍ່ຄົນ/ປີ; |
| 3.2 ພະນັກງານວິສາຫະກິດລັດ ແລະ ເອກະຊົນ | | 50.000 | ກີບ ຂຶ້ນໄປ ຕໍ່ຄົນ/ປີ; |
| 3.3 ວິສາຫະກິດສ່ວນບຸກຄົນ: | - ຂະໜາດ ນ້ອຍ | 50.000 | ກີບ ຂຶ້ນໄປ ຕໍ່ທະບຽນ/ປີ; |
| | - ຂະໜາດ ກາງ | 70.000 | ກີບ ຂຶ້ນໄປ ຕໍ່ທະບຽນ/ປີ; |
| | - ຂະໜາດ ສູງ | 100.000 | ກີບ ຂຶ້ນໄປ ຕໍ່ທະບຽນ/ປີ; |
| 3.4 ບໍລິສັດຮຸ້ນສ່ວນ ພາຍໃນ ແລະ ຕ່າງປະເທດ | | 250.000 | ກີບ ຂຶ້ນໄປ ຕໍ່ທະບຽນ/ປີ; |
| 3.5 ບໍລິສັດ ມະຫາຊົນ | | 200.000 | ກີບ ຂຶ້ນໄປ ຕໍ່ທະບຽນ/ປີ; |

3.6 ບໍລິສັດ ຈຳກັດ 150.000 ກີບ ຂຶ້ນໄປ ຕໍ່ທະບຽນ/ປີ;

3.7 ບໍລິສັດ ຈຳກັດຜູ້ດຽວ 120.000 ກີບ ຂຶ້ນໄປ ຕໍ່ທະບຽນ/ປີ;

3.8 ປະຊາຊົນ ທົ່ວໄປ: - ຄອບຄົວທຸກຍາກ 5.000 ກີບ ຕໍ່ຄົວເຮືອນ/ປີ;

- ຄອບຄົວພົ້ນທຸກ 10.000 ກີບ ຂຶ້ນໄປ ຕໍ່ຄົວເຮືອນ/ປີ.

- **ໝາຍເຫດ:** ຄົວເຮືອນທີ່ມີ ພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ, ວິສາຫະກິດລັດ ແລະ ເອກະຊົນ ທີ່ໄດ້ ປະກອບສ່ວນພັນທະ ຢູ່ກົມກອງແລ້ວ ແມ່ນຈະບໍ່ໄດ້ເສຍຢູ່ ຂັ້ນບ້ານ.

4. ການຂາຍຜະລິດຕະພັນ ຂອງສູນບຳບັດປິ່ນປົວ ແລະ ຝຶກວິຊາຊີບຜູ້ຕິດຢາເສບຕິດ;
5. ການບໍລິຈາກ ຫຼື ການປະກອບສ່ວນດ້ວຍຄວາມສະໝັກໃຈ ຈາກບຸກຄົນ, ນິຕິບຸກຄົນ, ອົງການຈັດຕັ້ງ ພັກ-ລັດ, ອົງການຈັດຕັ້ງພາຍໃນ ແລະ ຕ່າງປະເທດ ເປັນເງິນສົດ ຫຼື ວັດຖຸ;
6. ການເຄື່ອນໄຫວກິດຈະກຳຫາລາຍໄດ້ ແລະ ແຫຼ່ງທຶນອື່ນໆ ທີ່ຖືກຕ້ອງ ຕາມກົດໝາຍ.

**ມາດຕາ 7 ການນຳໃຊ້ເງິນກອງທຶນ.**

ກອງທຶນຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂບັນຫາຢາເສບຕິດ ນຳໃຊ້ເຂົ້າໃນວຽກງານຕ່າງໆ ດັ່ງນີ້:

1. ການໂຄສະນາເຜີຍແຜ່ລະບຽບກົດໝາຍ, ມະຕິ, ຄຳສັ່ງ ແລະ ນິຕິກຳອື່ນໆ ທີ່ພົວພັນກັບບັນຫາຢາເສບຕິດ;
2. ສຶກສາອົບຮົມ ເພື່ອສ້າງຈິດສຳນຶກໃຫ້ທົ່ວສັງຄົມຮັບຮູ້ ແລະ ເຂົ້າໃຈເຖິງພິດໄພ, ຜົນຮ້າຍຂອງຢາເສບຕິດ;
3. ສ້າງສູນບຳບັດປິ່ນປົວຜູ້ຕິດຢາເສບຕິດ, ສ້າງສາງເກັບມ້ຽນເຄື່ອງຂອງກາງຈາກການດຳເນີນຄະດີຢາເສບຕິດ;
4. ບຳບັດປິ່ນປົວ, ຟື້ນຟູສຸຂະພາບ ແລະ ຈັດຊື້ອຸປະກອນ, ເຄື່ອງມື ໃນການຝຶກວິຊາຊີບເບື້ອງຕົ້ນໃຫ້ແກ່ຜູ້ ຕິດຢາເສບຕິດ;
5. ການຄົ້ນຄວ້າວິໄຈ ກ່ຽວກັບຢາເສບຕິດ ແລະ ສານເຄມີຕົ້ນ ທີ່ນຳໃຊ້ເຂົ້າໃນການຜະລິດຢາເສບຕິດ; ຈັດຊື້ ນ້ຳຢາກວດສານເສບຕິດໃນຮ່າງກາຍ ຕໍ່ເປົ້າໝາຍທີ່ຢູ່ໃນກຸ່ມສ່ຽງ;
6. ປະຕິບັດມາດຕະການທາງດ້ານກົດໝາຍ ຕໍ່ຜູ້ກະທຳຜິດກ່ຽວກັບຢາເສບຕິດ (ການສ້າງແຜນມ້າງລາຍຄະດີ, ການຈັບຕົວເປົ້າໝາຍ ແລະ ການດຳເນີນຄະດີຕາມຂັ້ນຕອນຂອງກົດໝາຍ) ແລະ ວຽກງານການຈັດຕັ້ງປະຕິບັດຄຳ ຕັດສິນຂອງສານ;
7. ການຈັດຊື້ວັດຖຸ, ອຸປະກອນເຕັກນິກ ທີ່ຈຳເປັນຮັບໃຊ້ເຂົ້າໃນວຽກງານຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂ ບັນຫາຢາເສບຕິດ;
8. ສົ່ງເສີມ, ຊຸກຍູ້ປະຊາຊົນໃຫ້ຫັນໄປປະກອບອາຊີບອື່ນແທນການປູກພືດທີ່ມີສານເສບຕິດ (ຝິ່ນ, ກັນຊາ);
9. ປະຕິບັດນະໂຍບາຍຕໍ່ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ແລະ ຕໍ່ຜູ້ທີ່ໄດ້ຮັບເຄາະຮ້າຍ ຈາກການປະຕິບັດໜ້າທີ່ໃນການສະກັດກັ້ນ ແລະ ແກ້ໄຂບັນຫາຢາເສບຕິດ;
10. ວຽກງານບໍລິຫານກອງທຶນ, ການປຸກລະດົມຂົນຂວາຍ ແລະ ຊອກຫາແຫຼ່ງທຶນ ເພື່ອປະກອບເຂົ້າກອງທຶນ;
11. ການພົວພັນຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບບັນຫາຢາເສບຕິດ;
12. ການຈັດກອງປະຊຸມ ສະຫຼຸບຖອດຖອນບົດຮຽນຕິດຕາມ, ກວດກາ, ການຄຸ້ມຄອງ ແລະ ນຳໃຊ້ກອງທຶນ ແມ່ນໃຫ້ນຳໃຊ້ເງິນກອງທຶນ ຂັ້ນແຂວງ ບໍ່ໃຫ້ເກີນ 5% ແລະ ຂັ້ນເມືອງ ບໍ່ໃຫ້ເກີນ 3% ຕໍ່ຄັ້ງ.

**ມາດຕາ 8 ບັນຊີເງິນຝາກຂອງກອງທຶນ.**

ກອງທຶນຄວບຄຸມ, ສະກັດກັ້ນ, ແກ້ໄຂບັນຫາຢາເສບຕິດ ຕ້ອງເປີດບັນຊີຕິດຕາມ ຢູ່ຄັງເງິນປະຈຳແຂວງ, ຄັງເງິນ ປະຈຳເມືອງ, ທຸກການເຄື່ອນໄຫວບັນຊີກອງທຶນ ຕ້ອງຜ່ານລະບົບບັນຊີຂອງຄັງເງິນປະຈຳແຂວງ ແລະ ຄັງເງິນປະຈຳເມືອງ.

**ມາດຕາ 9 ການຖອນເງິນກອງທຶນ.**

ການຖອນເງິນກອງທຶນຈາກບັນຊີເງິນຝາກຂອງກອງທຶນ ຕ້ອງຖອນດ້ວຍແຊັກຂອງຄັງເງິນ ປະຈຳແຂວງ ແລະ ຄັງເງິນປະຈຳເມືອງ ດ້ວຍການຕົກລົງເຫັນດີ ແລະ ມີລາຍເຊັນຂອງປະທານຄະນະກຳມະການກວດກາ, ຄວບຄຸມຢາເສບຕິດ ຫຼື ຜູ້ທີ່ໄດ້ຮັບມອບສິດ ຈາກປະທານ ຄະນະກຳມະການກວດກາ ແລະ ຄວບຄຸມຢາເສບຕິດ ຂັ້ນຂອງຕົນ ຈຶ່ງສາມາດຖອນເງິນອອກໄດ້;

ການຖອນເງິນອອກຈາກບັນຊີເງິນຝາກຂອງກອງທຶນ ແມ່ນບໍ່ໃຫ້ເກີນລາຍຮັບທັງໝົດຂອງກອງທຶນ ໃນແຕ່ລະສົກປີງົບປະມານ ແລະ ຕ້ອງໃຫ້ມີເງິນແຮໄວ້ຢ່າງພຽງພໍ ເພື່ອຊຳລະໜີ້ຕ້ອງຈ່າຍ ທີ່ເກີດຂຶ້ນໃນສົກງົບປະມານ.

**ມາດຕາ 10 ການຂໍອະນຸຍາດນຳໃຊ້ເງິນກອງທຶນ.**

ການຈັດຕັ້ງກ່ຽວຂ້ອງ ທີ່ມີຈຸດປະສົງຂໍອະນຸມັດນຳໃຊ້ເງິນຈາກກອງທຶນ ເພື່ອຮັບໃຊ້ວຽກງານຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂບັນຫາຢາເສບຕິດ ຕາມມາດຕາ 7 ຂອງຂໍ້ຕົກລົງສະບັບນີ້ ຕ້ອງໄດ້ສ້າງແຜນວຽກ, ແຜນງົບປະມານລະອຽດ ເພື່ອສະເໜີຕໍ່ຄະນະກຳມະການກວດກາ, ຄວບຄຸມຢາເສບຕິດ ແລະ ສະພາບໍລິຫານກອງທຶນ ເພື່ອພິຈາລະນາ ແລ້ວສະເໜີຂໍອະນຸມັດສັ່ງຈ່າຍ ຕາມລະບຽບການ.

**ມາດຕາ 11 ສິດໃນການສັ່ງຈ່າຍ.**

ຜູ້ມີສິດໃນການສັ່ງຈ່າຍເງິນກອງທຶນຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂຢາເສບຕິດ ມີດັ່ງນີ້:

1. ຂັ້ນແຂວງ ແມ່ນປະທານຄະນະກຳມະການກວດກາ ແລະຄວບຄຸມຢາເສບຕິດ ຂັ້ນແຂວງ ຫຼື ຜູ້ຖືກມອບສິດ;
2. ຂັ້ນເມືອງ ແມ່ນປະທານຄະນະກຳມະການກວດກາ ແລະຄວບຄຸມຢາເສບຕິດ ຂັ້ນເມືອງ ຫຼື ຜູ້ຖືກມອບສິດ;
3. ໃນກໍລະນີສຸກເສີນ ຄະນະກຳມະການກອງທຶນ ຫຼື ສະພາບໍລິຫານກອງທຶນ ສາມາດສັ່ງຈ່າຍເງິນກອງທຶນໂດຍກົງ ເຂົ້າໃນວຽກງານການກວດກາ, ຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂບັນຫາຢາເສບຕິດ ໃນຂັ້ນຂອງຕົນ.

## ໝວດທີ 3
## ໂຄງປະກອບສະພາບໍລິຫານກອງທຶນຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂບັນຫາຢາເສບຕິດ

**ມາດຕາ 12 ທີ່ຕັ້ງຂອງກອງທຶນ.**

1. ຂັ້ນແຂວງ ຕັ້ງຢູ່ ກອງບັນຊາການ ປກສ ແຂວງ;
2. ຂັ້ນເມືອງ ຕັ້ງຢູ່ ກອງບັນຊາການ ປກສ ເມືອງ;

ກອງທຶນຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂບັນຫາຢາເສບຕິດ ແຕ່ລະຂັ້ນ ມີສະພາບໍລິຫານກອງທຶນ ແລະ ກອງເລຂາຂອງຕົນ.

**ມາດຕາ 13 ສະພາບໍລິຫານກອງທຶນ.**

1. ສະພາບໍລິຫານກອງທຶນ ແມ່ນການຈັດຕັ້ງສູງສຸດຂອງກອງທຶນ ຮັບຜິດຊອບເຄື່ອນໄຫວວຽກງານ ຂອງກອງທຶນ;
2. ສະພາບໍລິຫານກອງທຶນປະກອບດ້ວຍປະທານ, ຮອງປະທານ ແລະ ກຳມະການຈຳນວນໜຶ່ງ ທີ່ມາຈາກຂະແໜງການທີ່ກ່ຽວຂ້ອງ ຊຶ່ງຖືກແຕ່ງຕັ້ງໂດຍປະທານຄະນະກຳມະການກວດກາ ແລະຄວບຄຸມຢາເສບຕິດ ແຕ່ລະຂັ້ນ.

**ມາດຕາ 14 ໂຄງປະກອບບຸກຄະລາກອນສະພາບໍລິຫານກອງທຶນ ຂັ້ນແຂວງ**

ສະພາບໍລິຫານກອງທຶນຂັ້ນແຂວງ ປະກອບດ້ວຍ:

1. ຮອງເຈົ້າແຂວງ ເປັນປະທານ;
2. ຫົວໜ້າກອງບັນຊາການ ປກສ ແຂວງ ເປັນຮອງປະທານ;

3. ຫົວໜ້າ ຫ້ອງວ່າການແຂວງ ເປັນກຳມະການ;
4. ຮອງຫົວໜ້າ ພະແນກການເງິນແຂວງ ເປັນກຳມະການ;
5. ຮອງຫົວໜ້າ ພະແນກຍຸຕິທຳແຂວງ ເປັນກຳມະການ;
6. ຮອງຫົວໜ້າ ອົງການໄອຍະການປະຊາຊົນແຂວງ ເປັນກຳມະການ;
7. ຮອງປະທານ ສານປະຊາຊົນແຂວງ ເປັນກຳມະການ;
8. ຮອງຫົວໜ້າ ພະແນກແຜນການ ແລະ ການລົງທຶນແຂວງ ເປັນກຳມະການ;
9. ຮອງຫົວໜ້າ ພະແນກແຮງງານ ແລະສະຫວັດດີການສັງຄົມແຂວງ ເປັນກຳມະການ.

**ມາດຕາ 15 ໂຄງປະກອບບຸກຄະລາກອນສະພາບໍລິຫານກອງທຶນ ຂັ້ນເມືອງ.**

ສະພາບໍລິຫານກອງທຶນ ຂັ້ນເມືອງ ປະກອບດ້ວຍ:

1. ຮອງເຈົ້າເມືອງ ເປັນປະທານ;
2. ຫົວໜ້າ ກອງບັນຊາການ ປກສ ເມືອງ ເປັນຮອງປະທານ;
3. ຫົວໜ້າ ຫ້ອງວ່າການເມືອງ ເປັນກຳມະການ;
4. ຮອງຫົວໜ້າ ຫ້ອງການການເງິນເມືອງ ເປັນກຳມະການ;
5. ຮອງຫົວໜ້າ ຫ້ອງການຍຸຕິທຳເມືອງ ເປັນກຳມະການ;
6. ຮອງຫົວໜ້າ ອົງການໄອຍະການປະຊາຊົນເຂດ ເປັນກຳມະການ;
7. ຮອງປະທານ ສານປະຊາຊົນເຂດ ເປັນກຳມະການ;
8. ຮອງຫົວໜ້າ ຫ້ອງການແຜນການ ແລະ ການລົງທຶນເມືອງ ເປັນກຳມະການ;
9. ຮອງຫົວໜ້າ ຫ້ອງການແຮງງານ ແລະສະຫວັດດີການສັງຄົມເມືອງ ເປັນກຳມະການ.

**ມາດຕາ 16 ໂຄງປະກອບບຸກຄະລາກອນ ກອງເລຂາກອງທຶນ ຂັ້ນແຂວງ.**

ບຸກຄະລາກອນກອງເລຂາກອງທຶນ ຂັ້ນແຂວງ ປະກອບດ້ວຍ:

1. ຮອງຫົວໜ້າ ກອງບັນຊາການ ປກສ ແຂວງ ເປັນຫົວໜ້າ;
2. ຫົວໜ້າ ຫ້ອງຕຳຫຼວດ ປກສ ແຂວງ ເປັນຮອງ;
3. ຫົວໜ້າ ຂະແໜງຄົ້ນຄວ້າ-ສັງລວມ, ຫ້ອງວ່າການແຂວງ ເປັນຄະນະ;
4. ຫົວໜ້າ ຄັງເງິນແຫ່ງຊາດປະຈຳແຂວງ ເປັນຄະນະ;
5. ຫົວໜ້າ ຂະແໜງຄຸ້ມຄອງຊັບສິນແຫ່ງລັດ, ພະແນກການເງິນແຂວງ ເປັນຄະນະ;
6. ຫົວໜ້າ ຂະແໜງປະຕິບັດຄຳຕັດສິນຂອງສານ, ສານປະຊາຊົນແຂວງ ເປັນຄະນະ;
7. ຫົວໜ້າ ຫ້ອງການກອງບັນຊາການ ປກສ ແຂວງ ເປັນຄະນະ;
8. ຫົວໜ້າ ຫ້ອງພະລາທິການ ປກສ ແຂວງ ເປັນຄະນະ;
9. ຫົວໜ້າ ພະແນກຕຳຫຼວດສະກັດກັ້ນ ແລະ ຕ້ານຢາເສບຕິດ ປກສ ແຂວງ ເປັນຄະນະ;
10. ຫົວໜ້າ ພະແນກກວດກາ ແລະ ຄວບຄຸມຢາເສບຕິດ ປກສ ແຂວງ ເປັນຄະນະ;
11. ຫົວໜ້າ ພະແນກຄົ້ນຄວ້າ-ສັງລວມ ປກສ ແຂວງ ເປັນຄະນະ.

**ມາດຕາ 17 ໂຄງປະກອບບຸກຄະລາກອນ ກອງເລຂາກອງທຶນ ຂັ້ນເມືອງ.**

ບຸກຄະລາກອນກອງເລຂາກອງທຶນ ຂັ້ນເມືອງ ປະກອບດ້ວຍ:

1. ຮອງຫົວໜ້າ ກອງບັນຊາການ ປກສ ເມືອງ ເປັນຫົວໜ້າ;

2. ຫົວໜ້າ ພະແນກຕໍາຫຼວດ, ປກສ ເມືອງ ເປັນຮອງ;
3. ຫົວໜ້າ ໜ່ວຍງານບໍລິຫານ, ຫ້ອງວ່າການເມືອງ ເປັນຄະນະ;
4. ຫົວໜ້າ ໜ່ວຍງານງົບປະມານ, ຫ້ອງການການເງິນເມືອງ ເປັນຄະນະ;
5. ຫົວໜ້າ ໜ່ວຍງານຄຸ້ມຄອງຊັບສິນແຫ່ງລັດ, ຫ້ອງການການເງິນເມືອງ ເປັນຄະນະ;
6. ຫົວໜ້າ ໜ່ວຍງານປະຕິບັດຄໍາຕັດສິນຂອງສານ ເມືອງ ເປັນຄະນະ;
7. ຫົວໜ້າ ຫ້ອງການກອງບັນຊາການ ປກສ ເມືອງ ເປັນຄະນະ;
8. ຫົວໜ້າ ພະແນກພະລາທິການ, ປກສ ເມືອງ ເປັນຄະນະ;
9. ຫົວໜ້າ ໜ່ວຍງານສະກັດກັ້ນ ແລະ ຕ້ານຢາເສບຕິດ ປກສ ເມືອງ ເປັນຄະນະ;
10. ຫົວໜ້າ ໜ່ວຍງານຄົ້ນຄວ້າ-ສັງລວມ ປກສ ເມືອງ ເປັນຄະນະ.

## ໝວດທີ 4
## ສິດ ແລະ ໜ້າທີ່ ຂອງສະພາບໍລິຫານກອງທຶນຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂບັນຫາຢາເສບຕິດ

**ມາດຕາ 18 ສິດ ແລະ ໜ້າທີ່ ຂອງສະພາບໍລິຫານກອງທຶນຂັ້ນແຂວງ ແລະ ຂັ້ນເມືອງ.**

ສະພາບໍລິຫານກອງທຶນ ຂັ້ນແຂວງ ແລະ ຂັ້ນເມືອງ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຄຸ້ມຄອງບໍລິຫານກອງທຶນ ເພື່ອຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດນະໂຍບາຍ, ແຜນຍຸດທະສາດ, ແຜນຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ, ຂໍ້ຕົກລົງຂອງຄະນະກໍາມະການກວດກາ ແລະ ຄວບຄຸມຢາເສບຕິດ, ລະບຽບຂອງກອງທຶນ ແລະ ລະບຽບກົດໝາຍ ທີ່ກ່ຽວຂ້ອງ

2. ຄົ້ນຄວ້າ, ພິຈາລະນາ, ຮັບຮອງເອົາແຜນງົບປະມານ ແລະ ແຜນເຄື່ອນໄຫວວຽກງານປະຈໍາປີ ຂອງກອງທຶນຄວບຄຸມ, ສະກັດກັ້ນ, ແກ້ໄຂບັນຫາຢາເສບຕິດ ເພື່ອນໍາສະເໜີ ຕໍ່ຄະນະກໍາມະການກວດກາ ແລະຄວບຄຸມຢາເສບຕິດຂັ້ນຂອງຕົນ ພິຈາລະນາ ແລະ ຮັບຮອງເອົາ;

3. ຄົ້ນຄວ້າ, ສ້າງລະບຽບການກ່ຽວກັບການຄຸ້ມຄອງ, ການປົກປັກຮັກສາ ແລະ ນໍາໃຊ້ກອງທຶນ ລວມທັງຊັບສິນ, ພາຫະນະ, ວັດຖຸອຸປະກອນ ເພື່ອນໍາສະເໜີ ໃຫ້ຄະນະກໍາມະການກວດກາ, ຄວບຄຸມຢາເສບຕິດ ຂັ້ນຂອງຕົນພິຈາລະນາ ແລະ ຮັບຮອງເອົາ;

4. ສະເໜີແຕ່ງຕັ້ງ ຫຼື ປົດຕໍາແໜ່ງ ບຸກຄະລາກອນຂອງກອງເລຂາກອງທຶນ;

5. ປຸກລະດົມຂົນຂວາຍ, ຊອກຫາແຫຼ່ງທຶນຈາກບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ເພື່ອປະກອບເຂົ້າໃນກອງທຶນຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂບັນຫາຢາເສບຕິດ;

6. ຄຸ້ມຄອງ, ຕິດຕາມ, ກວດກາ ການເຄື່ອນໄຫວ, ນໍາໃຊ້ກອງທຶນ ໃຫ້ສອດຄ່ອງກັບລະບຽບການ, ເປົ້າໝາຍ, ແຜນການ, ມີຄວາມໂປ່ງໃສ ແລະ ມີປະສິດທິຜົນ;

7. ສະຫຼຸບ ແລະ ລາຍງານ ສະພາບການເຄື່ອນໄຫວວຽກງານຮອບດ້ານຂອງກອງທຶນ ໃຫ້ຄະນະກໍາມະການກວດກາ, ຄວບຄຸມຢາເສບຕິດ ຂັ້ນຂອງຕົນ ປະຈໍາ 6 ເດືອນ ແລະ ປະຈໍາປີ;

8. ຮັບຮອງບົດລາຍງານຜົນການກວດສອບດ້ານການເງິນ ຂອງກອງທຶນ;

9. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ, ການມອບໝາຍ ຂອງຄະນະກໍາມະການກວດກາ ແລະ ຄວບຄຸມຢາເສບຕິດ ຂັ້ນຂອງຕົນ.

**ມາດຕາ 19 ສິດ ແລະ ໜ້າທີ່ ຂອງກອງເລຂາສະພາບໍລິຫານກອງທຶນ ຂັ້ນແຂວງ ແລະ ຂັ້ນເມືອງ.**

ກອງເລຂາກອງທຶນຂັ້ນແຂວງ ແລະຂັ້ນເມືອງ ມີສິດ, ໜ້າທີ່ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ສ້າງ, ສັງລວມ ແລະ ນຳສະເໜີ ແຜນການນຳໃຊ້ກອງທຶນ ຕໍ່ສະພາບໍລິຫານກອງທຶນ ເພື່ອພິຈາລະນາຮັບຮອງເອົາ ແລະ ສະເໜີຄະນະກຳມະການກວດກາ, ຄວບຄຸມຢາເສບຕິດ ຂັ້ນຂອງຕົນ ອະນຸມັດ;

2. ສ້າງແຜນການລະດົມ, ຂຶນຂວາຍທຶນ ເຂົ້າກອງທຶນ ພ້ອມໂຄງການລະອຽດ ເພື່ອນຳສະເໜີ ຕໍ່ສະພາບໍລິຫານກອງທຶນ ພິຈາລະນາ ແລະ ຮັບຮອງເອົາ;

3. ສ້າງແຜນການເຄື່ອນໄຫວປະຈຳປີ ຂອງສະພາບໍລິຫານ ແລະ ຂອງກອງເລຂາ ເພື່ອສະເໜີຕໍ່ສະພາບໍລິຫານກອງທຶນ ພິຈາລະນາ ແລະ ຮັບຮອງເອົາ;

4. ສ້າງລະບຽບພາຍໃນ ກ່ຽວກັບການເຄື່ອນໄຫວ ຂອງສະພາບໍລິຫານ, ກອງເລຂາ ແລະ ລະບຽບການຄຸ້ມຄອງ, ນຳໃຊ້ກອງທຶນ;

5. ຄຸ້ມຄອງຊັບສິນ, ເງິນສົດ ແລະ ບັນຊີເງິນຝາກ ຂອງກອງທຶນບໍ່ໃຫ້ຕົກເຮ່ຍເສຍຫາຍ;

6. ເບີກຈ່າຍເງິນ ແລະ ວັດຖຸອຸປະກອນ ເພື່ອສະໜອງໃຫ້ແກ່ກິດຈະກຳຕ່າງໆ ຕາມແຜນການທີ່ສະພາບໍລິຫານກອງທຶນໄດ້ຮັບຮອງເອົາ;

7. ຕິດຕາມ, ກວດກາ ແລະ ປະເມີນຜົນ ການນຳໃຊ້ກອງທຶນ ຂອງພາກສ່ວນຕ່າງໆ ທີ່ໄດ້ຮັບອະນຸມັດ;

8. ສະຫຼຸບ, ລາຍງານ ສະພາບການເຄື່ອນໄຫວວຽກງານຮອບດ້ານຂອງກອງທຶນ ຕໍ່ສະພາບໍລິຫານກອງທຶນ ແລະ ຄະນະກຳມະການກວດກາ ແລະ ຄວບຄຸມຢາເສບຕິດ ຂັ້ນຂອງຕົນ ຢ່າງເປັນປົກກະຕິ;

9. ປະຕິບັດວຽກງານອື່ນ ຕາມການມອບໝາຍຂອງສະພາບໍລິຫານກອງທຶນ, ຄະນະກຳມະການກວດກາ ແລະ ຄວບຄຸມ ຢາເສບຕິດ ຂັ້ນຂອງຕົນ.

**ມາດຕາ 20 ກອງປະຊຸມສະພາບໍລິຫານກອງທຶນ.**

ກອງປະຊຸມສາມັນ ຂອງສະພາບໍລິຫານກອງທຶນ ຈັດຂຶ້ນປີລະ 2 ຄັ້ງ. ໃນກໍລະນີມີບັນຫາສຳຄັນທີ່ຕ້ອງໄດ້ປຶກສາຫາລື ແລະ ພິຈາລະນາຕົກລົງຮີບດ່ວນ ກໍ່ສາມາດຈັດກອງປະຊຸມວິສາມັນຂຶ້ນໄດ້ທຸກເວລາ ຕາມການຮຽກປະຊຸມຂອງປະທານ ຫຼື ຕາມການສະເໜີຂອງສະມາຊິກສະພາບໍລິຫານ ແລະ ກອງປະຊຸມຈະເປີດຂຶ້ນໄດ້ ກໍ່ຕໍ່ເມື່ອມີສະມາຊິກສະພາບໍລິຫານເຂົ້າຮ່ວມ ຢ່າງໜ້ອຍສອງສ່ວນສາມ ຂອງຈຳນວນສະມາຊິກສະພາບໍລິຫານກອງທຶນທັງໝົດ; ມະຕິກອງປະຊຸມສະພາບໍລິຫານ ຈະມີຜົນນຳໃຊ້ໄດ້ ກໍ່ຕໍ່ເມື່ອໄດ້ຮັບຄະແນນສຽງສ່ວນຫຼາຍຮັບຮອງເອົາ.

**ມາດຕາ 21 ກອງປະຊຸມສະຫຼຸບວຽກງານກອງທຶນ.**

ກອງປະຊຸມສະຫຼຸບວຽກງານກອງທຶນ ຈັດຂຶ້ນປີລະ 2 ຄັ້ງ ຄື: ກອງປະຊຸມສະຫຼຸບ ການຈັດຕັ້ງປະຕິບັດວຽກງານກອງທຶນ 6 ເດືອນຕົ້ນປີ ແລະ ສະຫຼຸບປະຈຳປີ ໂດຍແຈ້ງເຊີນ ບັນດາຄະນະກຳມະການກວດກາ, ຄວບຄຸມຢາເສບຕິດ ແລະ ສະພາບໍລິຫານກອງທຶນ ຂັ້ນຂອງຕົນເຂົ້າຮ່ວມ.

## ໝວດທີ 5

## ການກວດສອບ ແລະ ການສະຫຼຸບລາຍງານ

**ມາດຕາ 22 ການກວດສອບບັນຊີກອງທຶນ.**

ບັນຊີກອງທຶນຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂບັນຫາຢາເສບຕິດ ຕ້ອງໄດ້ຮັບການກວດກາ ແລະ ກວດສອບທຸກປີ ຕາມລະບຽບການ ຊຶ່ງດຳເນີນໂດຍອົງການກວດສອບ ແຫ່ງລັດ ຫຼື ອົງການກວດກາ ທີ່ໄດ້ຮັບມອບໝາຍ.

ຜົນການກວດກາ ແລະ ກວດສອບ ຕ້ອງລາຍງານໃຫ້ປະທານຄະນະກຳມະການກວດກາ, ຄວບຄຸມຢາເສບຕິດ ແຕ່ລະຂັ້ນ ແລະ ສາມາດເປີດເຜີຍໃຫ້ສັງຄົມຮັບຊາບ ຕາມການອະນຸຍາດ ຈາກປະທານຄະນະກຳມະການກວດກາ, ຄວບຄຸມຢາເສບຕິດ ແຕ່ລະຂັ້ນ.

**ມາດຕາ 23 ການສະຫຼຸບລາຍງານ.**

ກອງເລຂາກອງທຶນ ແຕ່ລະຂັ້ນ ຕ້ອງສົ່ງບົດສະຫຼຸບລາຍງານການເຄື່ອນໄຫວຂອງກອງທຶນ ໃຫ້ສະພາບໍລິຫານຂັ້ນຂອງຕົນ ເປັນປົກກະຕິທຸກໆ ເດືອນ, ໄຕມາດ, 6 ເດືອນ ແລະ ປະຈຳປີ.

ສະພາບໍລິຫານກອງທຶນ ຕ້ອງໄດ້ລາຍງານ ຜົນການຈັດຕັ້ງປະຕິບັດວຽກງານຂອງກອງທຶນປະຈຳປີ ຕໍ່ກອງປະຊຸມຂອງອົງການປົກຄອງແຂວງ, ເມືອງ ແລະ ກອງປະຊຸມສະໄໝສາມັນ ຂອງສະມາຊິກສະພາປະຊາຊົນແຂວງ, ສະພາປະຊາຊົນແຂວງ ປີລະໜຶ່ງຄັ້ງ.

## ໝວດທີ 6
## ອົງການຄຸ້ມຄອງກອງທຶນຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂບັນຫາຢາເສບຕິດ

**ມາດຕາ 24 ອົງການຄຸ້ມຄອງກອງທຶນ.**

ອົງການຄຸ້ມຄອງກອງທຶນຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂບັນຫາຢາເສບຕິດ:

1. ກອງບັນຊາການ ປ້ອງກັນຄວາມສະຫງົບ ແຂວງ;
2. ກອງບັນຊາການ ປ້ອງກັນຄວາມສະຫງົບ ເມືອງ.

**ມາດຕາ 25 ສິດ ແລະ ໜ້າທີ່ ຂອງກອງບັນຊາການປ້ອງກັນຄວາມສະຫງົບແຂວງ.**

ການຄຸ້ມຄອງກອງທຶນຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂບັນຫາຢາເສບຕິດ ກອງບັນຊາການປ້ອງກັນຄວາມສະຫງົບແຂວງ (ປກສ ແຂວງ) ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້ານະໂຍບາຍ, ສ້າງແຜນການ, ແຜນງານ, ຜັນຂະຫຍາຍ, ເຜີຍແຜ່ ຂໍ້ຕົກລົງກອງທຶນຄວບຄຸມ, ສະກັດກັ້ນດ, ແກ້ໄຂບັນຫາຢາເສບຕິດ, ບົດແນະນຳ, ແຈ້ງການຕ່າງໆ ໃຫ້ສັງຄົມຮັບຮູ້, ເຂົ້າໃຈຢ່າງເລິກເຊິ່ງ ແລະ ທົ່ວເຖິງ;
2. ຕິດຕາມ, ຊຸກຍູ້ ບຸກຄົນ, ນິຕິບຸກຄົນ, ອົງການຈັດຕັ້ງພາກລັດ, ເອກະຊົນອ້ອມຂ້າງແຂວງ ແລະ 7 ເມືອງ ປະກອບເງິນເຂົ້າກອງທຶນຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂບັນຫາຢາເສບຕິດ;
3. ນຳໃຊ້ເງິນກອງທຶນ ໃຫ້ຖືກຕ້ອງຕາມເປົ້າໝາຍທີ່ໄດ້ກຳນົດໄວ້ ໃນມາດຕາ 7 ຂອງຂໍ້ຕົກລົງສະບັບນີ້;
4. ຮັບພິຈາລະນາ ແລະ ແກ້ໄຂຄຳຮ້ອງ, ຄຳສະເໜີ ຕາມສິດ ແລະ ໜ້າທີ່ຂອງຕົນ;
5. ຕິດຕາມ, ກວດກາ, ປະເມີນຜົນ ແລະ ສະຫຼຸບລາຍງານການນຳໃຊ້ເງິນກອງທຶນ ໃຫ້ປະທານຄະນະກຳມະການກວດກາ ແລະ ຄວບຄຸມຢາເສບຕິດ ຂັ້ນແຂວງ ຮັບຊາບແຕ່ລະໄລຍະ.

**ມາດຕາ 26 ສິດ ແລະ ໜ້າທີ່ ຂອງກອງບັນຊາການ ປ້ອງກັນຄວາມສະຫງົບເມືອງ.**

ການຄຸ້ມຄອງກອງທຶນຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂບັນຫາຢາເສບຕິດ ກອງບັນຊາການປ້ອງກັນຄວາມສະຫງົບເມືອງ (ປກສ ເມືອງ) ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເກັບກຳຂໍ້ມູນ, ສ້າງແຜນການ ແລະ ແຜນງົບປະມານ ໃນການນຳໃຊ້ເງິນກອງທຶນຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂບັນຫາຢາເສບຕິດ;
2. ຕິດຕາມ, ຊຸກຍູ້ ບຸກຄົນ, ນິຕິບຸກຄົນ, ຄົວເຮືອນ, ອົງການຈັດຕັ້ງພາກລັດ ແລະ ເອກະຊົນອ້ອມຂ້າງເມືອງຂອງຕົນ ເພື່ອປະກອບເງິນເຂົ້າກອງທຶນຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂບັນຫາຢາເສບຕິດ;

3. ນຳໃຊ້ເງິນກອງທຶນໃຫ້ຖືກຕ້ອງຕາມເປົ້າໝາຍທີ່ໄດ້ກຳນົດໄວ້ ໃນມາດຕາ 7 ຂອງຂໍ້ຕົກລົງສະບັບນີ້;

4. ຮັບພິຈາລະນາ ແລະ ແກ້ໄຂຄຳຮ້ອງ, ຄຳສະເໜີ ຕາມສິດ ແລະ ໜ້າທີ່ຂອງຕົນ;

5. ຕິດຕາມ ແລະ ສະຫຼຸບລາຍງານການນຳໃຊ້ເງິນກອງທຶນ ໃຫ້ປະທານຄະນະກຳມະການກວດກາ ແລະ ຄວບຄຸມຢາເສບຕິດ ຂັ້ນເມືອງ ແລະ ຂັ້ນແຂວງ ຮັບຊາບແຕ່ລະໄລຍະ.

## ໝວດທີ 7
## ອົງການກວດກາພາຍໃນ ແລະ ອົງການກວດກາພາຍນອກ

**ມາດຕາ 27** ອົງການກວດກາພາຍໃນ.

ອົງການກວດກາພາຍໃນ ປະກອບມີ:

1. ກອງບັນຊາການ ປ້ອງກັນຄວາມສະຫງົບແຂວງ;
2. ຫ້ອງວ່າການແຂວງ;
3. ພະແນກການເງິນແຂວງ;
4. ພະແນກແຜນການ ແລະ ການລົງທຶນແຂວງ;

**ມາດຕາ 28** ອົງການກວດກາພາຍນອກ.

ອົງການກວດກາພາຍນອກ ປະກອບມີ:

1. ສະພາປະຊາຊົນແຂວງ;
2. ຄະນະກວດກາພັກ-ລັດ ຂັ້ນແຂວງ ແລະ ຂັ້ນເມືອງ;
3. ອົງການກວດສອບ ປະຈຳພາກເໜືອ;
4. ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ປະຊາຊົນບັນດາເຜົ່າ ພາຍໃຕ້ລັດຖະທຳມະນູນ ແລະກົດໝາຍ.

**ມາດຕາ 29** ເນື້ອໃນການກວດກາ.

ເນື້ອໃນການກວດກາ ກອງທຶນຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂບັນຫາຢາເສບຕິດ ມີດັ່ງນີ້:

1. ການຈັດຕັ້ງປະຕິບັດຫຼັກການ, ລະບຽບການ ແລະ ແຈ້ງການທີ່ກ່ຽວຂ້ອງກັບກອງທຶນ;
2. ລາຍຮັບ-ລາຍຈ່າຍຂອງກອງທຶນຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂບັນຫາຢາເສບຕິດ;
3. ປະລິມານ, ປະສິດທິພາບ, ປະສິດທິຜົນ ຂອງການນຳໃຊ້ກອງທຶນ;
4. ຄຳຮ້ອງທຸກ ຂອງພົນລະເມືອງ ຫຼື ການຈັດຕັ້ງ;
5. ຄວາມຮັບຜິດຊອບ ແລະ ການປະພຶດຂອງພະນັກງານ ທີ່ຈັດຕັ້ງປະຕິບັດວຽກງານຂອງກອງທຶນຄວບຄຸມ, ສະກັດກັ້ນ, ແກ້ໄຂບັນຫາຢາເສບຕິດ ແລະ ການປະຕິບັດນະໂຍບາຍຕ່າງໆ.

**ມາດຕາ 30** ຮູບແບບ ຂອງການກວດກາ.

ຮູບການກວດກາປະກອບດ້ວຍ:

1. ການກວດກາປົກກະຕິ ຊຶ່ງແມ່ນກວດກາຕາມແຜນການທີ່ກຳນົດໄວ້;
2. ການກວດກາ ເພື່ອຕິດຕາມ ຜົນຂອງການກວດກາຄືນ ພາຍຫຼັງທີ່ກ່າວເຕືອນ ຫຼື ແນະນຳໃຫ້ມີການປັບປຸງ ປ່ຽນແປງ;
3. ການກວດກາກະທັນຫັນ ແມ່ນກວດກາໂດຍບໍ່ໄດ້ແຈ້ງໃຫ້ຮູ້ລ່ວງໜ້າ;

- ການດຳເນີນການກວດກາ ໃຫ້ປະຕິບັດຕາມລະບຽບ, ກົດໝາຍ ຢ່າງເຂັ້ມງວດ;

## ໝວດທີ 8
## ຂໍ້ຫ້າມ

**ມາດຕາ 31 ຂໍ້ຫ້າມທົ່ວໄປ.**

ຫ້າມພະນັກງານ-ລັດຖະກອນ ຫຼື ເຈົ້າໜ້າທີ່ ຜູ້ທີ່ຮັບຜິດຊອບກອງທຶນຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂບັນຫາຢາເສບຕິດ ມີພຶດຕິກຳ ດັ່ງນີ້:

1. ສວຍໃຊ້ອຳນາດ, ຕຳແໜ່ງ, ໜ້າທີ່ ເພື່ອຍັກຍອກ, ຫາຜົນປະໂຫຍດສວນຕົວ ຫຼື ສ້າງຜົນເສຍຫາຍແກ່ຜູ້ອື່ນ;
2. ທວງເອົາ, ຂໍເອົາ, ຮັບສິນບົນຈາກບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ;
3. ປະຕິບັດໜ້າທີ່ດ້ວຍຄວາມປະໝາດ, ເລີ່ນເລີ້, ເມີນເສີຍ, ຂາດຄວາມຮັບຜິດຊອບຕໍ່ໜ້າທີ່;
4. ກົດໜ່ວງທ່ວງດຶງ ເອກະສານ ໃນການແກ້ໄຂບັນຫາຕ່າງໆ ກ່ຽວກັບການຄຸ້ມຄອງກອງທຶນ;
5. ຮຽກເອົາຄ່າທຳນຽມ, ຄ່າບໍລິການ ທີ່ບໍ່ຖືກຕ້ອງຕາມກົດໝາຍ;
6. ປອມແປງເອກະສານ, ອອກເອກະສານບໍ່ຖືກຕ້ອງ ຫຼື ທຳລາຍເອກະສານ;
7. ເປີດເຜີຍຄວາມລັບ, ເພີ່ມ ຫຼື ລຸດຕົວເລກງົບປະມານ, ການນຳໃຊ້ກອງທຶນຕາມລຳພັງໃຈ;
8. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ, ຂໍ້ຕົກລົງສະບັບນີ້ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 32 ຂໍ້ຫ້າມສຳລັບສະພາບໍລິຫານ ແລະ ກອງເລຂາກອງທຶນ.**

ຫ້າມບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ສວຍໂອກາດສໍ້ລາດບັງຫຼວງ;
2. ສົມຮູ້ຮ່ວມຄິດກັບເປົ້າໝາຍ ເພື່ອຍັກຍອກ ຫຼື ສໍ້ໂກງ;
3. ມີພຶດຕິກຳອື່ນ ທີ່ເປັນການລະເມີດຂໍ້ຕົກລົງສະບັບນີ້, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

## ໝວດທີ 9
## ນະໂຍບາຍຕໍ່ຜູ້ທີ່ມີຜົນງານ ແລະ ມາດຕະການຕໍ່ຜູ້ທີ່ລະເມີດ

**ມາດຕາ 33 ນະໂຍບາຍຕໍ່ຜູ້ທີ່ມີຜົນງານ.**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ປະກອບສ່ວນດ້ານເຫື່ອແຮງ, ສະຕິປັນຍາ ແລະ ຊັບສິນ ເຂົ້າໃນກອງທຶນຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂບັນຫາຢາເສບຕິດ ຈະໄດ້ຮັບການຍ້ອງຍໍຕາມຄວາມເໝາະສົມ.

**ມາດຕາ 34 ມາດຕະການຕໍ່ຜູ້ທີ່ລະເມີດ.**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃດ ຫາກໄດ້ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກສຶກສາອົບຮົມ ກ່າວເຕືອນ ລົງວິໄນ, ປັບໃໝ ຫຼື ຖືກດຳເນີນຄະດີ ຕາມກົດໝາຍ.

## ໝວດທີ 10
## ບົດບັນຍັດສຸດທ້າຍ

**ມາດຕາ 35 ການຈັດຕັ້ງປະຕິບັດ**

ຄະນະກຳມະການ, ສະພາບໍລິຫານກອງທຶນ ແລະ ກອງເລຂາກອງທຶນ ແຕ່ລະຂັ້ນ ມີໜ້າທີ່ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ ແລະ ລາຍງານສະພາບການເຄື່ອນໄຫວ

ຮອບດ້ານ ຂອງກອງທຶນຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂບັນຫາຢາເສບຕິດ ໃຫ້ຄະນະກຳມະການກວດກາ ແລະ ຄວບຄຸມຢາເສບຕິດ ຢ່າງໜ້ອຍປີລະ ສອງເທື່ອ.

ບັນດາພະແນກການ, ອົງການທຽບເທົ່າ, ສອງກອງບັນຊາການປ້ອງກັນຊາດ-ປ້ອງກັນຄວາມສະຫງົບແຂວງ, ອົງການປົກຄອງເມືອງ 7 ເມືອງ, ທຸກພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ໃຫ້ການຮ່ວມມືໃນການຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 36 ຜົນສັກສິດ.**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ; ພາຍຫຼັງໄດ້ລົງຈົດໝາຍເຫດທາງລັດຖະການ ສິບຫ້າວັນ;

ຂໍ້ຕົກລົງສະບັບນີ້ ປ່ຽນແທນຂໍ້ຕົກລົງຂອງທ່ານເຈົ້າແຂວງ ສະບັບເລກທີ 542/ຈຂ.ອຊ, ລົງວັນທີ 26 ພຶດສະພາ 2020.

**ເຈົ້າແຂວງ**

ບຸນຄົງ ຫຼ້າຈຽມພອນ